ຫ້ອງການຄະນະຊີ້ນຳພັດທະນາຊົນນະບົດ
ແລະລຶບລ້າງຄວາມທຸກຍາກຂັ້ນສູນກາງ
ເຂົ້າ ເລກທີ: 301
ວັນທີ: 10 JUN 2008

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 13/ ນຍ

ນະຄອນຫຼວງວຽງຈັນ, ວັນທີ 09.06.2008

# ຄຳສັ່ງເພີ່ມເຕີມ
# ຂອງນາຍົກລັດຖະມົນຕີ ກ່ຽວກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ

ເຖິງ : ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການລັດຖະບານ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາເຈົ້າແຂວງ ແລະ ເຈົ້າເມືອງ ໃນທົ່ວປະເທດ.

- ເພື່ອສືບຕໍ່ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ ກ່ຽວກັບການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກ ໃຫ້ບັນລຸຜົນຕາມຄາດໝາຍ; ເພື່ອໃຫ້ວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ດຳເນີນໄປໂດຍສອດຄ່ອງກັບຄຳສັ່ງແນະນຳ ຂອງກົມການເມືອງສູນກາງພັກ ສະບັບເລກທີ 09/ ກມສພ, ລົງວັນທີ 08 ມິຖຸນາ 2004 ແລະ ຄຳສັ່ງເພີ່ມເຕີມ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 14/ ຄລສພ, ລົງວັນທີ 07 ທັນວາ 2007 ກໍຄືບັນດາມະຕິ ຂອງກອງປະຊຸມຄະນະບໍລິຫານງານສູນກາງພັກ ຄັ້ງທີ 3, 4, 5 ແລະ ທີ 6 ສະໄໝທີ VIII.

- ເພື່ອໃຫ້11ແຜນງານໃຫຍ່ ແລະ 111 ໂຄງການຈຸດສຸມກໍຄືແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 6 ຂອງລັດຖະບານ ໂດຍສະເພາະແມ່ນໂຄງການພັດທະນາຊົນນະບົດ-ສ້າງບ້ານ ແລະ ກຸ່ມບ້ານພັດທະນາ ໄດ້ຮັບການຈັດຕັ້ງປະຕິບັດ ປະກົດຜົນເປັນຈິງ, ປະກອບສ່ວນເຮັດໃຫ້ການເຕີບໂຕຂອງເສດຖະກິດ ບັນລຸຄາດໝາຍ ບົນພື້ນຖານການຊຸກຍູ້ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການ ສ້າງລາຍໄດ້ເຂົ້າຄອບຄົວ ໂດຍຕິດພັນກັບການແກ້ໄຂຄວາມທຸກຍາກ ແລະ ປັບປຸງ-ຍົກສູງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນຕື່ມອີກ.

- ເພື່ອປ່ຽນແທນຄຳສັ່ງແນະນຳ ເລກທີ 09/ ນຍ, ສະບັບລົງວັນທີ 07 ພຶດສະພາ 2007.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວອອກຄຳສັ່ງ ເພີ່ມເຕີມ

1). ໃຫ້ບັນດາລັດຖະມົນຕີ, ຫົວໜ້າອົງການລັດຖະບານ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາເຈົ້າແຂວງ ແລະ ເຈົ້າເມືອງ ເພີ່ມທະວີຄວາມເອົາໃຈໃສ່ ຕໍ່ການຈັດຕັ້ງປະຕິບັດ ແລະ ຊີ້ນຳນຳພາວຽກກໍ່ສ້າງຮາກຖານການເມືອງ ສ້າງບ້ານ ແລະ ກຸ່ມບ້ານພັດທະນາ ໂດຍຖືເປັນມາດຕະການຍຸດທະສາດ ພື້ນຖານຍາວນານ ຂອງການສືບຕໍ່ສ້າງ ແລະ ບູລະນະລະບອບປະຊາທິປະໄຕ

ປະຊາຊົນ ຕາມຈຸດໝາຍສັງຄົມນິຍົມ ໂດຍຮັບປະກັນໃຫ້ຖືກຕາມ 4 ຄາດໝາຍ ແລະ 4 ເນື້ອໃນທີ່ກຳນົດໄວ້ໃນຄຳສັ່ງແນະນຳ ເລກທີ 09/ ກມສພ.

2). ໃນການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ກ່ອນອື່ນໝົດ ໃຫ້ເອົາໃຈໃສ່ສ້າງບ້ານຈຸດສຸມຕົວແບບ ດ້ານການພັດທະນາ ໃຫ້ເກີດເປັນຕົນເປັນໂຕຂຶ້ນສາກ່ອນ ເພື່ອເປັນແບບຢ່າງ ຫລື ເປັນຕົວແບບ ສຳລັບການສືບຕໍ່ຜັນຂະຫຍາຍໄປສູ່ບ້ານອື່ນໆ ທັງເປັນບ່ອນທົດສະນະສຶກສາ ຖອດຖອນບົດຮຽນສຳລັບພະນັກງານ ແລະ ປະຊາຊົນ ກ່ຽວກັບວຽກງານຮາກຖານ ສ້າງບ້ານ ແລະ ກຸ່ມບ້ານພັດທະນາ.

- ບ້ານຈຸດສຸມຕົວແບບ ດ້ານການພັດທະນາ ຕ້ອງສ້າງຢູ່ບ່ອນທີ່ມີເງື່ອນໄຂສະດວກ ແລະ ມີທ່າແຮງສຳລັບການພັດທະນາ ເປັນຕົ້ນແມ່ນ ມີເນື້ອທີ່ສຳລັບການຜະລິດ, ມີຊົນລະປະທານ, ມີເສັ້ນທາງຄົມມະນາຄົມ ແລະ ການຂົນສົ່ງ, ມີເງື່ອນໄຂດ້ານການຕະຫລາດ ແລະ ອື່ນໆອີກ ; ສຳລັບປະຊາຊົນ ກໍມີຄວາມຕື່ນຕົວເປັນເຈົ້າ ແລະ ມີມູນເຊື້ອດຸໝັ່ນທຳມາຫາກິນ.

- ການສ້າງບ້ານຈຸດສຸມຕົວແບບ ດ້ານການພັດທະນາ ຕ້ອງດຳເນີນໄປຢ່າງຮອບດ້ານ, ແຕ່ໃນນັ້ນ ອັນທີ່ເປັນຈຸດສຸມໃຈກາງ ແມ່ນການແກ້ໄຂຄວາມທຸກຍາກ ຂອງຄອບຄົວ ແລະ ການສົ່ງເສີມການຜະລິດເປັນສິນຄ້າ ຫລືເວົ້າລວມແມ່ນຖືການພັດທະນາເສດຖະກິດ-ສັງຄົມ ເປັນໃຈກາງ ເພື່ອໃຫ້ປະຊາຊົນພາຍໃນບ້ານ ຫລຸດພົ້ນຈາກຄວາມທຸກຍາກ, ມີຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ວັດທະນະທຳ ນັບມື້ນັບດີຂຶ້ນ.

3). ໃຫ້ນະຄອນຫລວງ ແລະ ແຂວງຊີ້ນຳ ແຕ່ລະເມືອງ ໃຫ້ລະອຽດກ່ຽວກັບການກຳນົດ ບ້ານຈຸດສຸມຕົວແບບ ດ້ານການພັດທະນາ ເພື່ອສຸມທຶນ, ສຸມພະນັກງານ, ສຸມການຊີ້ນຳ-ນຳພາ ເຂົ້າໃສ່ສ້າງໃຫ້ເປັນບ້ານພັດທະນາ.

ການກຳນົດບ້ານຈຸດສຸມຕົວແບບ ດ້ານການພັດທະນາ ຕ້ອງຕິດພັນກັບການສ້າງໂຄງການພັດທະນາ ຂອງບ້ານນັ້ນໆ ໂດຍກຳນົດໜ້າວຽກ, ຕຳແໜ່ງງານໃຫ້ລະອຽດ ເພື່ອຈັດພະນັກງານກ່ຽວຂ້ອງໄປຮັບຜິດຊອບ. ການພັນເອົາພະນັກງານລົງກໍ່ສ້າງຮາກຖານ ຕ້ອງພັນລົງຕາມວຽກທີ່ກຳນົດໃນແຜນລວມ ຂອງການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ກ່ອນອື່ນແມ່ນບ້ານຈຸດສຸມຕົວແບບດ້ານການພັດທະນາ ຈຶ່ງຖືໄດ້ວ່າເປັນການລົງຮາກຖານທີ່ຖືກທິດ.

ບ້ານຈຸດສຸມຕົວແບບ ດ້ານການພັດທະນາ ຂອງເມືອງ ຕ້ອງຖືກຈັດເຂົ້າໃນແຜນລວມຂອງການສ້າງບ້ານ ແລະ ກຸ່ມບ້ານພັດທະນາ ຂອງນະຄອນຫລວງ ແລະ ແຂວງ. ໝາຍຄວາມວ່ານະຄອນຫລວງ ແລະ ແຂວງ ຕ້ອງສະໜັບສະໜູນດ້ານທຶນຮອນ, ພາຫະນະ, ພະນັກ ງານ ແລະການຊີ້ນຳ ເພື່ອຊ່ວຍເມືອງ ຈັດຕັ້ງປະຕິບັດ.

- ໝາກຜົນສຸດທ້າຍ ທີ່ຢັ້ງຢືນຜົນໄດ້ຮັບຂອງການລົງກໍ່ສ້າງຮາກຖານການເມືອງ, ສ້າງບ້ານ ແລະ ກຸ່ມບ້ານພັດທະນາ ແມ່ນບ້ານພັດທະນາ.

4). ບ້ານພັດທະນາ ແມ່ນບ້ານທີ່ມີຜົນສຳເລັດໃນການສ້າງສາຮອບດ້ານ, ໂດຍບັນລຸເງື່ອນໄຂ ແລະ ມາດຕະຖານຕົ້ນຕໍດັ່ງນີ້:

- ບັນດາການຈັດຕັ້ງໃນລະບົບການເມືອງ ຢູ່ບ້ານນັ້ນ ມີຄວາມເຂັ້ມແຂງ, ເປັນຕົ້ນມີໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ, ມີອຳນາດການປົກຄອງບ້ານ ທີ່ຮູ້ຄຸ້ມຄອງບໍລິຫານບ້ານ, ມີວິງການແນວໂຮມ, ອົງການຈັດຕັ້ງມະຫາຊົນ, ໜ່ວຍໄກ່ເກ່ຍທີ່ເຄື່ອນໄຫວຕາມພາລະບົດບາດ ແລະ ໜ້າທີ່ໄດ້ດີ ແລະ ຕໍ່ເນື່ອງ.

- ຊາວບ້ານມີຄວາມຕື່ນຕົວການເມືອງ, ບ້ານມີສະຖຽນລະພາບ ແລະ ມີຄວາມສະຫງົບໜັກແໜ້ນ ; ບໍ່ມີບັນຫາຢາເສບຕິດ; ເປັນບ້ານປອດຄະດີ; ປະຊາຊົນ ມີຄວາມສາມັກຄີປອງດອງ ແລະ ເອື້ອເຟື້ອຊ່ວຍເຫລືອກັນ.

- ມີພື້ນຖານການຜະລິດ-ການບໍລິການ ສຳລັບສ້າງລາຍໄດ້ທີ່ຕໍ່ເນື່ອງໝັ້ນຄົງ ; ໃນບ້ານມີແຕ່ຄອບຄົວພໍກິນພໍໃຊ້ ແລະ ຮັ່ງມີ, ບໍ່ມີຄອບຄົວທຸກຍາກ; ປະຊາຊົນມີຊີວິດການເປັນຢູ່ປົກກະຕິດີ.

- ອັດຕາເດັກນ້ອຍໃນເກນອາຍຸເຂົ້າຮຽນ ໄດ້ຮຽນໜັງສືບໍ່ຫລຸດ 95%; ອັດຕາການຮູ້ໜັງສື ຂອງຜູ້ໃຫຍ່ ອາຍຸ 15 ປີຂຶ້ນໄປ ບໍ່ຫລຸດ 85%; ເປັນບ້ານທີ່ບັນລຸເງື່ອນໄຂຕົ້ນຕໍ ຂອງບ້ານສາທາລະນະສຸກ ແບບຢ່າງ ເປັນຕົ້ນແມ່ນເປັນບ້ານທີ່ມີສິ່ງແວດລ້ອມທີ່ດີ, ເຮືອນຊານບ້ານຊ່ອງສະອາດ ແລະ ເປັນລະບຽບ; ໝົດທຸກຄອບຄອບໃນບ້ານມີນ້ຳສະອາດ ແລະ ມີວິດຖ່າຍຊົມໃຊ້; ການສັກຢາ ແລະ ປລູກຢາກັນພະຍາດ ບໍ່ຫລຸດ 95%.

- ກຸ່ມບ້ານພັດທະນາ ແມ່ນກຸ່ມບ້ານເຊິ່ງທຸກໆບ້ານ ທີ່ຢູ່ໃນກຸ່ມນັ້ນໄດ້ເປັນບ້ານພັດທະນາແລ້ວ.

5). ໃຫ້ບັນດາກະຊວງ, ອົງການລັດຖະບານ ແລະ ທຸກທ້ອງຖິ່ນ ປະຕິບັດທິດຊີ້ນຳ ທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ່ VIII ຂອງພັກທີ່ວ່າ " ຕ້ອງ ລວມເອົາກິດຈະກຳ ແລະ ໂຄງການຕ່າງໆທີ່ກ່ຽວຂ້ອງ ກັບການພັດທະນາຊົນນະບົດ ເຂົ້າເປັນ ກິດຈະກຳລວມ ຂອງການສ້າງບ້ານພັດທະນາ" ນັ້ນຢ່າງເຂັ້ມງວດ ໂດຍໃຫ້ບັນດາກະຊວງ, ອົງການຂອງລັດຖະບານ ແລະ ພະແນກການສາຍຕັ້ງທີ່ກ່ຽວຂ້ອງ ຂອງທ້ອງຖິ່ນ ເອົາໂຄງການ ວຽກງານຂອງຕົນ ເຂົ້າໃນແຜນລວມ ຂອງຄະນະພັກ ແລະ ອຳນາດການປົກຄອງທ້ອງຖິ່ນ ກ່ຽວກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ. ທຸກກິດຈະກຳ ແລະ ທຸກໂຄງການທີ່ດຳເນີນຢູ່ຮາກຖານບ້ານ ແລະ ກຸ່ມບ້ານ (ການສ້າງບ້ານປ້ອມໝັ້ນ ແລະ ກຸ່ມບ້ານສູ້ຮົບຕິດລຽນ, ການສ້າງບ້ານວັດທະນະທຳ ແລະ ອື່ນໆ ອີກ... ) ຕ້ອງລວມເຂົ້າເປັນໂຄງການວຽກງານລວມອັນດຽວ ແລະ ຢູ່ໃຕ້ການນຳພາ-ຄຸ້ມຄອງ ຂອງຄະນະ ພັກກຸ່ມບ້ານ, ໜ່ວຍພັກ ແລະ ອຳນາດການປົກຄອງບ້ານ. ໝາຍຄວາມວ່າ ທຸກວຽກທີ່ດຳເນີນຢູ່ ຮາກຖານບ້ານ-ກຸ່ມບ້ານ ລ້ວນແຕ່ແມ່ນວຽກທີ່ຕ້ອງປະກອບສ່ວນ ໃນການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ຢູ່ພາຍໃຕ້ການນຳພາ ຂອງຄະນະພັກ ແລະ ການຄຸ້ມຄອງຂອງອຳນາດການປົກຄອງຮາກຖານ. ບັນດາຂະແໜງການສາຍຕັ້ງ ຕ້ອງເອົາໂຄງການຂອງຕົນລົງສົມທົບຕາມແຜນລວມ ຂອງຄະນະພັກ ແລະ ອຳນາດການປົກຄອງຮາກຖານ, ບໍ່ໃຫ້ເຮັດຕ່າງຫາກພໍໃຜພໍລາວ.

6). ໃຫ້ອຳນາດການປົກຄອງທ້ອງຖິ່ນ ເອົາໃຈໃສ່ຕື່ມອີກ ຕໍ່ການຂຶ້ນໂຄງການລະອຽດ ໃນການສ້າງບ້ານ ແລະ ກຸ່ມບ້ານພັດທະນາ, ກ່ອນອື່ນໝົດ ແມ່ນໂຄງການສ້າງບ້ານຈຸດສຸມຕົວແບບດ້ານການພັດທະນານັ້ນ ໃຫ້ສອດຄ່ອງກັບ 4 ຄາດໝາຍ ແລະ 4 ເນື້ອໃນ, ຊຶ່ງໃນນັ້ນອັນຕົ້ນຕໍລວມມີໂຄງການດັ່ງນີ້ :

**6.1. ໂຄງການໂຄສະນາສຶກສາອົບຮົມການເມືອງແນວຄິດຕິດແໜ້ນກັບການຮັບປະກັນສະຖຽນລະພາບ ແລະ ຄວາມສະຫງົບ.**

ການພັດທະນາບ້ານ ຈະປະສົບຜົນສຳເລັດ ກໍ່ຕໍ່ເມື່ອຢູ່ໃນບ້ານນັ້ນ ແລະ ບໍລິເວນອ້ອມແອ້ມນັ້ນ ມີສະຖຽນລະພາບ ແລະ ມີຄວາມສະຫງົບປອດໄພ, ຊາວບ້ານມີຄວາມຮັບ ຮູ້ເຂົ້າໃຈແນວທາງນະໂຍບາຍ ແລະ ມີແນວຄິດພັດທະນາ. ຢາກໃຫ້ຊາວບ້ານມີແນວຄິດພັດທະນາ ພວກເຮົາຕ້ອງມີໂຄງການໂຄສະນາ ສຶກສາອົບຮົມການເມືອງແນວຄິດ ທີ່ແທດຕົວຈິງ, ເໝາະສົມ ກັບແຕ່ລະເປົ້າໝາຍ ແລະ ຕ້ອງປະຕິບັດຕໍ່ເນື່ອງ ເປັນຕົ້ນແມ່ນຕໍ່ຊາວບ້ານ ຜູ້ທີ່ເປັນຫລັກແຫລ່ງ ແກ່ນສານພາຍໃນບ້ານ. ຊາວບ້ານທີ່ມີແນວຄິດພັດທະນາ ແມ່ນຊາວບ້ານທີ່ມີຄວາມຄິດຕື່ນຕົວເປັນເຈົ້າການໃນການທຳມາຫາກິນ ໃຫ້ຫລຸດພົ້ນຈາກຄວາມທຸກຍາກ , ຢາກຮັ່ງມີ ; ຮູ້ສາມັກຄີຊ່ວຍເຫລືອ ກັນ ແລະ ມີຄວາມຕັດສິນໃຈພ້ອມພຽງ ກັນຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກຕ່າງໆ ໃນການສ້າງສາພັດທະນາບ້ານຊ່ອງ ເພື່ອປັບປຸງຄຸນນະພາບຊີວິດຂອງຕົນໃຫ້ດີຂຶ້ນ; ເວົ້າລວມແມ່ນຊາວບ້ານມີຄວາມຕື່ນຕົວຫ້າວຫັນປະຕິບັດໜ້າທີ່ ແລະ ພັນທະຂອງຕົນ, ປະກອບສ່ວນໃນການພັດທະນາບ້ານຊ່ອງ, ໃນການກໍ່ສ້າງພັກ-ປັບປຸງອຳນາດການປົກຄອງ ແລະ ໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**6.2. ໂຄງການພັດທະນາພື້ນຖານເສດຖະກິດ-ສັງຄົມ ແລະ ໂຄງການສົ່ງເສີມການຜະລິດສິນຄ້າ-ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.**

ກ. ໃຫ້ຮີບຮ້ອນຂຶ້ນໂຄງການພັດທະນາ ພື້ນຖານເສດຖະກິດ-ສັງຄົມ ຢູ່ຮາກຖານບ້ານ-ກຸ່ມບ້ານ ເປັນຕົ້ນທົ່ນທາງ, ຊົນລະປະທານ; ການຈັດສັນອາຊີບປ່ຽນແທນທີ່ໝັ້ນຄົງ ເພື່ອແກ້ໄຂຄວາມທຸກຍາກ ແລະ ຢຸດຕິການຖາງປ່າເຮັດໄຮ່ປູກເຂົ້າ ; ການກໍ່ສ້າງສ້ອມແປງ ໂຮງຮຽນ, ສຸກສາລາ, ເຮືອນພັກພະນັກງານ ແລະ ອື່ນໆ...

ການຂຶ້ນໂຄງການເຫລົ່ານີ້ ຕ້ອງມີການສຳຫລວດຄົ້ນຄວ້າ ແລະ ຄິດໄລ່ປະສິດທິຜົນ ຈາກນັ້ນໃຫ້ຈັດລຽງລຳດັບບູລິມະສິດສຳລັບ ການລົງທຶນ ແລະ ຄວາມຕ້ອງການພະນັກງານ ຮັບຜິດຊອບການຈັດຕັ້ງປະຕິບັດ.

ໃຫ້ເມືອງກັບແຂວງ ແລະ ນະຄອນຫຼວງ ເປັນເອກະພາບກັນ ກ່ຽວກັບການສະເໜີນຳໃຊ້ທຶນເພື່ອປະຕິບັດ ໂຄງການບູລິມະສິດຂອງຕົນ ເຊັ່ນ: ການນຳໃຊ້ທຶນກັບທີ່ ຂອງແຂວງ, ທຶນຈາກງົບປະມານຂອງລັດຖະບານ, ທຶນຊ່ວຍເຫລືອກູ້ຢືມຈາກຕ່າງປະເທດ ; ທຶນຂອງນັກລົງທຶນຂອງ ພາຍໃນ ແລະ ຕ່າງປະເທດ, ທຶນສິນເຊື່ອ ຂອງທະນາຄານ ແລະ ທຶນຈາກແຫຼ່ງອື່ນໆ.

ຢາກກຳນົດໄດ້ຄືແນວນັ້ນ ການນຳຂອງເມືອງ ແລະ ແຂວງ/ ນະຄອນຫລວງ ຕ້ອງໃຫ້ພະນັກງານ ວິຊາການ ຜູ້ຮູ້ວຽກທີ່ກ່ຽວຂ້ອງ ລົງເຖິງບ້ານ ເພື່ອດຳເນີນການສຳຫລວດ ເກັບກຳຂໍ້ມູນ, ຂຶ້ນເປັນໂຄງການ ແລະ ເຮັດບົດວິພາກ ເສດຖະກິດ-ເຕັກນິກ, ຈາກນັ້ນ ການນຳທ້ອງຖິ່ນ ຈຶ່ງຕົກລົງເປັນເອກະພາບ ນຳສະເໜີ ຕໍ່ລັດຖະບານ.

- ເມື່ອມີໂຄງການ ທີ່ໄດ້ຈັດລະດັບບູລິມະສິດ ຄືແນວນັ້ນ ລັດຖະບານ ຈຶ່ງສາມາດຈັດລະດັບເຂົ້າໃນແຜນພັດທະນາ ແລະ ແຜນງົບປະມານປະຈຳປີ ໄດ້ຢ່າງສອດຄ່ອງ ; ພ້ອມທັງມີຂໍ້ມູນບ່ອນອີງສຳລັບການໂຄສະນາ ຂົນຂວາຍນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ຂ. ໃຫ້ເພີ່ມຄວາມເອົາໃຈໃສ່ຂຶ້ນໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ. ໃນປັດຈຸບັນຢູ່ແຕ່ລະທ້ອງຖິ່ນ ຂອງປະເທດເຮົາລ້ວນແຕ່ມີບ່ອນທີ່ມີເງື່ອນໄຂອຳນວຍ ແລະ ມີພື້ນຖານໂຄງລ່າງຮອງຮັບການຜະລິດເປັນສິນຄ້າ ເປັນຕົ້ນ ແມ່ນມີຊົນລະປະທານ, ມີຖະໜົນຫົນທາງ, ນອກຈາກນັ້ນກໍມີທ່າແຮງດ້ານອື່ນໆອີກ ເຊັ່ນວ່າມີພື້ນທີ່ເໝາະສົມສຳລັບການລ້ຽງສັດ ປູກພືດ-ປູກໄມ້ຊະນິດຕ່າງໆ ; ສ່ວນປະຊາຊົນ ກໍມີມູນເຊື້ອໃນການປູກການລ້ຽງ ແຕ່ຍັງຂາດການສົ່ງເສີມ, ຊຶ່ງເຮັດໃຫ້ປະຊາຊົນ ບໍ່ສາມາດຜະລິດເປັນສິນຄ້າ, ສ້າງລາຍໄດ້ທີ່ໝັ້ນຄົງ...

ໃຫ້ບັນດາກະຊວງ, ອົງການກ່ຽວຂ້ອງ ຂອງລັດຖະບານ ສົມທົບແໜ້ນກັບອຳນາດການປົກຄອງທ້ອງຖິ່ນ ເພື່ອສຶກສາຄົ້ນຄວ້າ ສ້າງສູນສົ່ງເສີມການຜະລິດເປັນສິນຄ້າຂຶ້ນ ເປັນຕົ້ນແມ່ນສູນຄົ້ນຄວ້າ-ບໍລິການດ້ານແນວພັນພືດ ແລະ ສັດ ; ສູນບໍລິການດ້ານສັດຕະວະແພດ, ສູນບໍລິການສິນເຊື່ອ ແລະ ເກັບຊື້ຜົນຜະລິດ ແລະ ອື່ນໆອີກ ເພື່ອເຮັດໜ້າທີ່ບໍລິການດ້ານທຶນຮອນ, ເຕັກນິກວິຊາການ ແລະ ດ້ານການຕະຫຼາດ ຊ່ວຍປະຊາຊົນໃຫ້ສາມາດຜະລິດເປັນສິນຄ້າໄດ້ຢ່າງຍືນຍົງ.

- ໃນຕໍ່ໜ້ານີ້ ການຂຶ້ນໂຄງການພັດທະນາພື້ນຖານເສດຖະກິດ-ສັງຄົມ ຢູ່ຮາກຖານຕ້ອງດຳເນີນໄປພ້ອມໆກັບ ການຈັດສັນການລົງທຶນ ເຂົ້າໃສ່ການສົ່ງເສີມການປູກຝັງ-ລ້ຽງສັດ ເປັນສິນຄ້າ ແລະ ການບໍລິການຮັບໃຊ້ປະຊາຊົນ ຢູ່ຮາກຖານນັ້ນໆຢ່າງເໝາະສົມ.

6.3. ໂຄງການປັບປຸງລະບົບການເມືອງ ແລະ ບຳລຸງສ້າງພະນັກງານກັບທີ່.

ໂຄງການຕ່າງໆ ທີ່ຈັດຕັ້ງປະຕິບັດຢູ່ບ້ານ ກຸ່ມບ້ານ ຈະປະສົບຜົນສຳເລັດ ຫລືບໍ່ປະສົບຜົນສຳເລັດ ສ່ວນໜຶ່ງທີ່ສຳຄັນແມ່ນຂຶ້ນກັບການນຳພາ-ຊີ້ນຳ ຂອງຄະນະພັກ, ໜ່ວຍພັກ-ອຳນາດການປົກຄອງ ແລະ ການປະກອບສ່ວນຂອງຊາວບ້ານ.

ໃຫ້ກະຊວງອົງການລັດຖະບານ ສົມທົບແໜ້ນກັບຄະນະພັກ ອຳນາດການປົກຄອງທ້ອງຖິ່ນ ເພື່ອສ້າງໂຄງການ ແລະ ຕັ້ງໜ້າປະຕິບັດໂຄງການ ກໍ່ສ້າງຝຶກອົບຮົມ ຍົກລະດັບທາງດ້ານວັດທະນະທຳ ແລະ ຄວາມຮູ້ດ້ານການເມືອງ-ການປົກຄອງ ; ຄວາມຮູ້ພື້ນຖານດ້ານການປູກຝັງລ້ຽງສັດ, ຄວາມຮູ້ພື້ນຖານດ້ານອະນາໄມ-ກັນພະຍາດ ແລະ ອື່ນໆອີກໃຫ້ແກ່ ພະນັກງານ ທີ່ເຮັດວຽກປະຈຳຢູ່ຮາກຖານ ໂດຍສະເພາະແມ່ນເລຂາ-ຮອງເລຂາ ຄະນະພັກຮາກຖານ ຫລືໜ່ວຍ ພັກ, ນາຍບ້ານ-ຄະນະບ້ານ ; ນອກຈາກນັ້ນ ກໍແມ່ນຜູ້ເປັນຫລັກແຫລ່ງ ຢູ່ແຕ່ລະບ້ານເຊັ່ນ ຜູ້ຊົງຄຸນວຸດທິ, ຫົວໜ້າສິ່ງຊາວ, ເຈົ້າກົກເຈົ້າເຫລົ່າ, ນາຍຄູ, ນາຍໝໍ, ພະສົງ... ເພື່ອເປັນກຳລັງຊ່ວຍ ໜູນການພັດທະນາຢູ່ບ້ານ ແລະ ກຸ່ມບ້ານ.

ການຝຶກອົບຮົມຍົກລະດັບຕ້ອງເຮັດເປັນແຕ່ລະຫົວຂໍ້ສະເພາະ ສຳລັບແຕ່ລະເປົ້າໝາຍ ແລະ ເຮັດໄລຍະສັ້ນໆ ໃນລະດູການທີ່ເໝາະສົມ.

ໃຫ້ກຳແໜ້ນ ແລະ ປະຕິບັດທິດນຳທີ່ວ່າ, ການພັດທະນາຢູ່ຮາກຖານໃດ ຕ້ອງໃຫ້ຄົນຜູ້ທີ່ດຳລົງຊີວິດ, ທຳມາຫາກິນຢູ່ ຮາກຖານນັ້ນ ເຂົ້າຮ່ວມຢ່າງເປັນເຈົ້າການ ແລະ ຕ້ອງໃຫ້ເຂົາເຈົ້າ

ໄດ້ຮັບຜົນປະໂຫຍດ; ມີແຕ່ເຮັດຄືແນວນັ້ນ ການພັດທະນາ ຈຶ່ງຈະປະສົບຜົນສຳເລັດ ແລະ ມີຄວາມຍືນຍົງ. ສະນັ້ນ ຈຶ່ງໃຫ້ຖືສຳຄັນ ແລະ ໃຫ້ເອົາໃຈໃສ່ຈິດຈໍ່ ຕໍ່ການບຳລຸງຍົກລະດັບ ບຸກຄະລາກອນທີ່ຢູ່ຮາກຖານນັ້ນໆ ໃຫ້ເປັນ "ພັດທະນາກອນ ".

7). ຕັ້ງແຕ່ສົກປີ 2008-2009 ນີ້ໄປ ໃຫ້ກະຊວງແຜນການ ແລະ ການລົງທຶນ ; ໃຫ້ກະຊວງການເງິນ ຈັດວຽກງານກໍ່ສ້າງຮາກຖານການເມືອງ ສ້າງບ້ານ ແລະ ກຸ່ມບ້ານພັດທະນາ ເປັນວຽກນຶ່ງສະເພາະ ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ຈັດເປັນຮ່ວງສະເພາະໃນແຜນງົບປະມານແຫ່ງລັດ ປະຈຳແຕ່ລະສົກປີ.

8). ມອບໃຫ້ເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາເຈົ້າແຂວງ ຊີ້ນຳເມືອງ ແລະ ວິຊາການກ່ຽວຂ້ອງຄົ້ນຄວ້າຄິດໄລ່ ກ່ຽວກັບການສ້າງຫ້ອງການ ແລະ ເຮືອນພັກ ຢູ່ເຂດຈຸດສຸມກຸ່ມບ້ານທັງນີ້ກໍເພື່ອໃຫ້ພະນັກງານການເມືອງ ແລະ ພະນັກງານວິຊາການ ທີ່ລົງປະຈຳຢູ່ຮາກຖານຕາມໂຄງການ ມີບ່ອນພັກເຊົາ, ມີບ່ອນເຮັດວຽກທີ່ເໝາະສົມ ແລະ ມີຄວາມອຸ່ນອ່ຽນ ປະຕິບັດໜ້າທີ່ ; ໂດຍໃຫ້ນະຄອນຫລວງ ແລະ ແຂວງ ຈັດເຂົ້າໃນແຜນການ ແລະ ແຜນງົບປະມານຮ່ວງກໍ່ສ້າງຮາກຖານ, ສ້າງບ້ານ ແລະ ກຸ່ມບ້ານພັດທະນາໃນແຕ່ລະປີ.

- ໃຫ້ກະຊວງ ໂຍທາທິການ ແລະ ຂົນສົ່ງ ອອກແບບອາຄານຫ້ອງການ ແລະ ເຮືອນພັກພະນັກງານຢູ່ເຂດຈຸດສຸມຕົວແບບ ໃຫ້ເປັນມາດຕະຖານດຽວກັນ ແລະ ໃນລາຄາຫົວໜ່ວຍທີ່ສົມເຫດສົມຜົນ, ໂດຍຮັບປະກັນຄວາມໝັ້ນຄົງຖາວອນ, ມີປະໂຫຍດໃຊ້ສອຍສູງສຸດ ກະທັດລັດ ແລະປະຢັດ.

9). ໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແຫ່ງຊາດ ເພີ່ມທະວີບົດບາດ ເປັນເສນາທິການຊ່ວຍລັດຖະບານ ໃນການຄົ້ນຄວ້າຈັດສັນທຶນ ເຂົ້າໃສ່ໂຄງການ ໃຫ້ຖືກກັບຈຸດສຸມພັດທະນາ ຂອງທ້ອງຖິ່ນ ; ເຮັດພາລະບົດບາດປະສານງານ ລະຫວ່າງ ບັນດາຂະແໜງການ-ອົງການຂັ້ນສູນກາງ ກັບທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ ບັນດາໂຄງການ ແລະ ກິດຈະການຕ່າງໆ ເພື່ອແກ້ໄຂຄວາມທຸກຍາກ ພ້ອມນັ້ນ ກໍເຮັດພາລະບົດບາດ ຕິດຕາມກວດກາ ແລະ ສະຫລຸບສັງລວມ ບັນຫາຕ່າງໆ ເພື່ອລາຍງານລັດຖະບານ ພິຈາລະນາແກ້ໄຂ ໃຫ້ທັນການ.

- ທຸກໂຄງການ ຂອງກະຊວງ-ອົງການລັດຖະບານ ທີ່ກ່ຽວຂ້ອງກັບການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກ ທີ່ນຳໄປປະຕິບັດຢູ່ທ້ອງຖິ່ນ ຕ້ອງໃຫ້ອຳນາດການປົກຄອງທ້ອງຖິ່ນຮັບຮູ້ ແລະໃຫ້ທ້ອງຖິ່ນມີສ່ວນຮ່ວມ ໃນການຄຸ້ມຄອງ ຫລືຄຸ້ມຄອງໂດຍກົງ.

- ມອບໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແຫ່ງຊາດ ຄົ້ນຄວ້າອອກລະບຽບການ ແລະ ກົນໄກການຄຸ້ມຄອງ ນຳໃຊ້ທຶນຈາກແຫລ່ງຕ່າງໆ ເຂົ້າໃນໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເປັນຕົ້ນທຶນກູ້ຢືມຈາກທະນາຄານໂລກ ແລະ ສະຖາບັນການເງິນຕ່າງໆ, ລວມທັງທຶນຊ່ວຍເຫລືອທາງການ ຈາກປະເທດເພື່ອນມິດ ແລະ ອົງການທີ່ບໍ່ແມ່ນລັດຖະບານ ເພື່ອໃຫ້ສາມາດນຳໃຊ້ໄດ້ໄວຂຶ້ນ ແລະ ໃຊ້ມີປະສິດທິຜົນກວ່າເກົ່າ.

ໃຫ້ທັນການນຳໃຊ້ທຶນເຫລົ່ານັ້ນ ເຂົ້າສູ່ການປະຕິບັດໂຄງການຈຸດສຸມ ຂອງການສ້າງບ້ານ ແລະກຸ່ມບ້ານພັດທະນາ ຂອງທ້ອງຖິ່ນ. ພ້ອມກັນນັ້ນ ກໍ່ໃຫ້ຕິດຕາມກຳລະພາບ ການຈັດຕັ້ງ ປະຕິບັດຢ່າງເລິກເຊິ່ງ ເພື່ອເຫັນອັນເຮັດຖືກ ເຮັດບໍ່ຖືກ ແລ້ວປັບປຸງແກ້ໄຂ ໃຫ້ທັນການ.

10). ໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແຫ່ງຊາດ ຮັບຮ້ອນລົມທົບກັບກະຊວງກ່ຽວຂ້ອງ ແລະ ສະຖາບັນຄົ້ນຄວ້າເສດຖະກິດ ຄົ້ນຄວ້າກຳນົດມາດຕະຖານ ຄວາມທຸກຍາກ ຢູ່ປະເທດເຮົາຄືນໃໝ່ ໂດຍອີງໃສ່ບົດຮຽນຂອງປະເທດອ້ອມຂ້າງ ແລະ ມາດຕະຖານ ທີ່ອົງການສະຫະປະຊາຊາດວາງອອກ ເພື່ອນຳສະເໜີລັດຖະບານຮັບຮອງເອົາ.

11). ໃຫ້ຄົ້ນຄວ້າຄືນໃໝ່ ກ່ຽວກັບ **ກອງທຶນພັດທະນາບ້ານ ໃນ 47 ເມືອງທີ່ທຸກຍາກກວ່າໝູ່,** ໂດຍຫັນເອົາກອງທຶນດັ່ງກ່າວ ເຂົ້າໃນຮ່ວງງົບປະມານສຳລັບວຽກ ກໍ່ສ້າງຮາກຖານການເມືອງ ສ້າງບ້ານ ແລະ ກຸ່ມບ້ານພັດທະນາ ຂອງແຕ່ລະທ້ອງຖິ່ນ, ໂດຍມອບໃຫ້ ແຂວງ ນະຄອນຫຼວງ ເປັນຜູ້ຕົກລົງນຳໃຊ້ເຂົ້າໃນວຽກຈຸດສຸມຢ່າງຖືກຕ້ອງກັບແຕ່ລະເປົ້າໝາຍ.

12). ໃຫ້ ທະນາຄານ ແຫ່ງ ສປປ ລາວ **ຊີ້ນຳ ແລະ ຕິດຕາມກວດກາເປັນປະຈຳ ການເຄື່ອນໄຫວ ຂອງ ທະນາຄານນະໂຍບາຍ, ທັງນີ້ກໍ່ເພື່ອໃຫ້ທະນາຄານດັ່ງກ່າວ ປະຕິບັດນະໂຍບາຍສິນເຊື່ອ** ຖືກຕາມວັດຖຸປະສົງ ທີ່ກຳນົດໄວ້ນັ້ນ ຄື: ປ່ອຍສິນເຊື່ອໃຫ້ຄອບຄົວ ຫຼືກຸ່ມຄອບຄົວທຸກຍາກ ໃນບັນດາ ເມືອງ ທີ່ທຸກຍາກກວ່າໝູ່ ເປັນຕົ້ນຕໍ; ແຕ່ບໍ່ແມ່ນປ່ອຍສິນເຊື່ອ ຮັບໃຊ້ເປົ້າໝາຍອື່ນ.

- **ການປ່ອຍສິນເຊື່ອໃຫ້ຄອບຄົວ ຫຼືກຸ່ມຄອບຄົວທຸກຍາກ ຕ້ອງອີງໃສ່ຄວາມເຫັນຂອງບ້ານ;** ໝາຍຄວາມວ່າ ໃຫ້ບ້ານ ຫຼືກຸ່ມບ້ານ ເປັນຜູ້ກຳນົດວ່າ ຄວນໃຫ້ສິນເຊື່ອ ແກ່ຄອບຄົວ ຫຼືກຸ່ມຄອບຄົວໃດ, ພ້ອມກັນນັ້ນ ກໍ່ມອບໃຫ້ບ້ານ ແລະ ກຸ່ມບ້ານ ຊ່ວຍຮັບຜິດຊອບຄຸ້ມຄອງ-ຊີ້ນຳ ຄອບຄົວຫຼືກຸ່ມຄອບຄົວ ຮ່ວມກັບທະນາຄານ ເພື່ອນຳໃຊ້ເງິນກູ້ (ຫຼືສິນເຊື່ອ) ໃຫ້ເກີດຜົນຕົວຈິງ ແລະ ສາມາດເກັບກູ້ຄືນໄດ້.

- **ໃຫ້ທະນາຄານນະໂຍບາຍ ສົມທົບກັບ ອຳນາດການປົກຄອງຮາກຖານ ເພື່ອຄົ້ນຄວ້າ ກຳນົດເປົ້າໝາຍ ການປ່ອຍສິນເຊື່ອ ໃຫ້ຖືກຕາມເປົ້າໝາຍຈຸດສຸມ ຂອງການແກ້ໄຂຄວາມທຸກຍາກ ກໍ່ຄືການສ້າງບ້ານ ພັດທະນາ ຂອງເມືອງນັ້ນໆ.**

13). ໃຫ້ແຂວງ ແລະ ເມືອງ ເອົາໃຈໃສ່ຕື່ມອີກ ຕໍ່ການສ້າງກອງ ທຶນຕ່າງໆ ຂອງຊາວບ້ານ; ພ້ອມກັນນັ້ນ ກໍໃຫ້ເພີ່ມທະວີການຕິດຕາມກວດກາ ການເຄື່ອນໄຫວ **ເພື່ອໃຫ້ກອງທຶນເຫລົ່ານັ້ນເສີມຂະຫຍາຍຄຸນປະໂຫຍດໄດ້ຢ່າງຕັ້ງໜ້າກວ່າເກົ່າ; ສະກັດກັ້ນບໍ່ໃຫ້ເກີດບັນຫາຫຍໍ້ທໍ້ ທີ່ຈະສົ່ງຜົນກະທົບ ຕໍ່ຄວາມສາມັກຄີຂອງຊາວບ້ານ ກໍຄືຕໍ່ຂະບວນການສ້າງບ້ານ ແລະ ກຸ່ມບ້ານພັດທະນາ.**

- ເພື່ອໃຫ້ກອງທຶນຕ່າງໆໝັ້ນຄົງ ແລະ ມີການຂະຫຍາຍຕົວ, ໃຫ້ອຳນາດການປົກຄອງທ້ອງຖິ່ນ **ສົມທົບກັບໜ່ວຍບໍລິການຂອງທະນາຄານນະໂຍບາຍ ແລະພາກສ່ວນອື່ນ** ທີ່ກ່ຽວຂ້ອງຊ່ວຍແນະນຳ ຫລື ຈັດຕັ້ງຝຶກອົບຮົມຊາວບ້ານ ກ່ຽວກັບການຄຸ້ມຄອງກອງທຶນ ໂດຍສະເພາະແມ່ນດ້ານການບັນຊີ ແລະ ການຕິດຕາມກວດກາ ການນຳໃຊ້ທຶນ ; ສ່ວນຂະແໜງການຜະລິດ ແລະ ບໍລິການທີ່ກ່ຽວຂ້ອງ ກໍຕ້ອງລົງຕິດຕາມຊຸກຍູ້ ແລະ ຊ່ວຍເສີມສ້າງຄວາມສາມາດ ໃຫ້ແກ່ສະມາຊິກກອງທຶນ ໃນດ້ານ **ການຜະລິດ ແລະ ການບໍລິການ.**

14). ໃຫ້ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ເປັນໃຈກາງປະສານສົມທົບ ກັບບັນດາກະຊວງ ແລະ ອົງການລັດຖະບານ ເປັນຕົ້ນ ກະຊວງກະສິກຳ-ປ່າໄມ້, ອົງການຄຸ້ມຄອງທີ່ດິນແຫ່ງຊາດ, ກະຊວງ ປ້ອງກັນປະເທດ, ກະຊວງ ແຜນການ ແລະການລົງທຶນ ແລະ ສົມທົບກັບບັນດາແຂວງ/ ນະຄອນຫລວງ ກ່ອນອື່ນແມ່ນທ້ອງຖິ່ນ ທີ່ມີປະຊາຊົນຍ້າຍຖິ່ນຖານແບບບໍ່ຖືກຕ້ອງ ເພື່ອຂຶ້ນ

ໂຄງການຈັດສັນອາຊີບ, ທີ່ທຳມາຫາກິນ ແລະ ພູມລຳເນົາຄືນໃຫມ່ ໃຫ້ເໝາະສົມຢູ່ແຕ່ລະທ້ອງຖິ່ນ, ຈາກນັ້ນຈຶ່ງຂຶ້ນເປັນແຜນການລວມ ສຳລັບທົ່ວປະເທດ ແນໃສ່ແກ້ໄຂບັນຫາ ໃຫ້ມີຄວາມໜັກແໜ້ນ; ໃຫ້ປະຊາຊົນມີຄວາມອຸ່ນອ່ຽນໃນການດຳລົງຊີວິດ ທຳມາຫາກິນ.

- ຢູ່ໃນໂຄງການຈັດສັນຂອງແຕ່ລະທ້ອງຖິ່ນນັ້ນ ຕ້ອງລະບຸແຈ້ງວ່າຈະຍົກຍ້າຍ ແລະ ຈັດສັນປະຊາຊົນໄປຢູ່ບ່ອນໃດ ແລະ ຈະໃຫ້ປະຊາຊົນເຮັດຫຍັງ ຕ້ອງລົງທຶນ ຫລື ໃຊ້ງົບປະມານເທົ່າໃດ.

- ໂຄງການລະອຽດຕົວຈິງເຫົ່ລານັ້ນ ຕ້ອງຖືກຈັດເປັນບູລິມະສິດ ໃນການປະຕິບັດ ດ້ວຍການລົງທຶນຂອງລັດ, ຂອງທະນາຄານ ຫລື ໃຫ້ຕິດພັນກັບ ໂຄງການລົງທຶນ ຂອງບັນດາບໍລິສັດພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນຢູ່ໃນບໍລິເວນໃກ້ຄຽງນັ້ນ ; ໃນນັ້ນ ໃຫ້ເອົາໃຈໃສ່ເປັນພິເສດ ຕໍ່ການຈັດສັນປະຊາຊົນເຂົ້າໃນໂຄງການປູກຝັງ-ລ້ຽງສັດ ທີ່ຕິດພັນກັບການນຳໃຊ້ທີ່ດິນ ຕາມສູດ 1+4, ສູດ 2+3 ແລະ ສູດອື່ນໆ ທີ່ເໝາະສົມກັບສະພາບຈຸດພິເສດ ຂອງພື້ນທີ່ ແລະ ມູນເຊື້ອການດຳລົງຊີວິດ ຂອງປະຊາຊົນ ໃນແຕ່ລະບໍລິເວນ ( ມີເອກະສານການນຳໃຊ້ສູດຄັດຕິດ).

15). ໃຫ້ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ຄົ້ນຄວ້າລະບຽບການອະນຸມັດໂກຕ້າ ແລະ ການຮັບເອົາພະນັກງານ ຕາມໂກຕ້າປະຈຳປີ ໂດຍສອດຄ່ອງກັບທິດນຳ ທັນເອົາພະນັກງານລົງເຮັດວຽກປະຈຳຢູ່ຮາກຖານ ໃຫ້ພຽງພໍກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາ ໂດຍມີການສົມທົບແໜ້ນກັບແຕ່ລະທ້ອງຖິ່ນ ແລະ ຂະແໜງສາຍຕັ້ງອື່ນໆ. ໃນນັ້ນ ໃຫ້ເອົາໃຈໃສ່ເປັນພິເສດ ຕໍ່ການຮັບເອົາພະນັກງານຊົນເຜົ່າ ແລະ ຜູ້ທີ່ຮູ້ເຮັດວຽກໂຄສະນາ ສຶກສາອົບຮົມແນວຄິດການເມືອງ, ພະນັກງານວິຊາການ ດ້ານການປູກຝັງ-ລ້ຽງສັດ, ນາຍຄູ ນາຍໝໍ ເພື່ອໄປປະຈຳຢູ່ເມືອງ ແລະ ຮາກຖານ.

- ນະຄອນຫລວງ ແລະ ແຂວງຕ່າງໆຕ້ອງຊ່ວຍເມືອງ ໃນການຈັດວຽກເຂົ້າໃນໂຄງການ ຕິດພັນກັບການກຳນົດຄວາມຕ້ອງການ ພະນັກງານເຂົ້າໃນຕຳແໜ່ງງານຕ່າງໆ; ຈາກນັ້ນ ໃຫ້ສະເໜີທາງທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ເພື່ອສັງລວມສະເໜີລັດຖະບານ.

- ໃຫ້ຄົ້ນຄວ້າປະຕິບັດລະບອບນະໂຍບາຍ ສົ່ງເສີມພະນັກງານ ຜູ້ທີ່ເຮັດວຽກຢູ່ຮາກຖານ ທີ່ມີຄວາມຫຍຸ້ງຍາກ ຫ່າງໄກສອກຫລີກ ແລະ ທຸລະກັນດານ.

16). ໃຫ້ກະຊວງ ກະສິກຳ-ປ່າໄມ້ ເປັນໃຈກາງປະສານສົມທົບ ກັບກະຊວງ-ອົງການ ສູນກາງ ແລະ ທ້ອງຖິ່ນຕ່າງໆ ໃນທົ່ວປະເທດ ເພື່ອຄົ້ນຄວ້າລະອຽດ ກ່ຽວກັບການສ້າງສູນສົ່ງເສີມການຜະລິດກະສິກຳ ເປັນສິນຄ້າ ຢູ່ເຂດຈຸດສຸມພັດທະນາ ຂອງທ້ອງຖິ່ນຕ່າງໆ ເພື່ອສົ່ງເສີມການປູກຝັງ - ລ້ຽງສັດ ຂອງປະຊາຊົນ ໃຫ້ມີສະມັດທະພາບສູງ, ໂດຍອີງໃສ່ສະພາບຈຸດພິເສດ ດ້ານມູນເຊື້ອ ຂອງປະຊາຊົນ ກໍຄືທ່າແຮງດ້ານທີ່ດິນຊັບພະຍາກອນທຳມະຊາດ ແລະ ດ້ານພື້ນຖານໂຄງລ່າງທີ່ມີແລ້ວ.

- ສູນສົ່ງເສີມກະສິກຳ ຕ້ອງເຄື່ອນໄຫວຕິດພັນໂດຍກົງ ກັບການຜະລິດ ຂອງປະຊາຊົນ ຢູ່ບ້ານ ແລະ ກຸ່ມບ້ານ ເພື່ອສະໜັບສະໜູນ ສົ່ງເສີມໃຫ້ເກີດການຜະລິດກະສິກຳເປັນສິນຄ້າ ທີ່ມີປະສິດທິພາບ ແລະ ຍືນຍົງ ; ຊຶ່ງຕ້ອງປະຕິບັດໃຫ້ໄດ້ໜ້າທີ່ພື້ນຖານຈຳນວນນຶ່ງ :

+ ແນະນຳ ແລະ ສົ່ງເສີມການນຳໃຊ້ແນວພັນໃຫມ່ ທີ່ມີສະມັດຖະພາບ, ພ້ອມທັງຊຸກຍູ້ການຜະລິດ ແລະ ແຜ່ຂະຫຍາຍແນວພັນໃຫມ່.

+ ຊ່ວຍແນະນຳ ແລະ ບໍລິການເຕັກນິກ ດ້ານການປູກ-ການລ້ຽງ ແບບໃຫມ່ ທີ່ມີປະສິດທິຜົນ.

+ ຊ່ວຍບໍລິຫານ ແລະ ຈັດການເລື່ອງນ້ຳ, ພ້ອມທັງແນະນຳວິທີນຳໃຊ້ ຝຸ່ນຢາແລະ ບົວລະບັດຮັກສາພືດພັນ.

+ ຊ່ວຍໃນການປ້ອງກັນ ແລະ ປິ່ນປົວພະຍາດສັດ; ຊ່ວຍໃນການປ້ອງກັນ ແລະ ປາບສັດຕູພືດ.

+ ຊ່ວຍແນະນຳການເກັບກ່ຽວມ້ຽນມັດ, ການປຸງແຕ່ງຜົນຜະລິດ ແລະ ການຕະຫລາດ.

+ ຊ່ວຍໃນການຈັດຊື້ອຸປະກອນ ແລະ ປັດໃຈຮັບໃຊ້ການຜະລິດລວມທັງແຫລ່ງທຶນ ເພື່ອຊຸກຍູ້ສົ່ງເສີມ ແລະ ອື່ນໆອີກ.

17). ໃຫ້ນະຄອນຫລວງ ແລະ ບັນດາແຂວງ ດຳເນີນການສຳຫລວດຕີລາຄາ ຜົນການດຳເນີນວຽກງານຮາກຖານ, ສ້າງບ້ານ ແລະ ກຸ່ມບ້ານພັດທະນາ ໃນແຕ່ລະປີ ເພື່ອກຳນົດໃຫ້ໄດ້ວ່າມີບ້ານໃດ ຢູ່ໃນທ້ອງຖິ່ນຂອງຕົນໄດ້ກາຍເປັນ " ບ້ານພັດທະນາ" ແລ້ວ; ຈາກນັ້ນ ໃຫ້ປະກາດຮັບຮອງເອົາໃນໂອກາດສະເຫລີມສະຫລອງວັນຊາດ 2 ທັນວາ ຂອງທຸກໆປີ .

18). ໃຫ້ບັນດາກະຊວງ-ອົງການລັດຖະບານ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນທົ່ວປະເທດ ຄົ້ນຄວ້າເຊື່ອມຊຶມຢ່າງເລິກເຊິ່ງ ຄຳສັ່ງເພີ່ມເຕີມສະບັບນີ້ ແລະ ຈັດຕັ້ງການເຜີຍແຜ່ແນະນຳໃຫ້ພະນັກ ງານລະມາຊິກພັກຢ່າງທົ່ວເຖິງ ; ເປັນຕົ້ນພະນັກງານ ທີ່ເຮັດວຽກກໍ່ສ້າງຮາກຖານ.

- ຂໍ້ໃດ, ບັນຫາໃດ ພົວພັນເຖິງຄວາມຮັບຜິດຊອບ ຫລື ຂຶ້ນກັບພາລະໜ້າທີ່ຂອງພາກສ່ວນໃດກໍໃຫ້ພາກສ່ວນນັ້ນເປັນເຈົ້າການຄົ້ນຄວ້າຜັນຂະຫຍາຍເປັນອັນລະອຽດ ໂດຍໄວ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

19). ບັນດາກະຊວງ, ອົງການທຽບເທົ່າ, ອຳນາດການປົກຄອງທຸກຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ດ້ວຍຄວາມຮັບຜິດຊອບ.

20). ຄຳສັ່ງສະບັບນີ້ປ່ຽນແທນຄຳສັ່ງແນະນຳ ສະບັບເລກທີ 09/ ນຍ, ລົງວັນທີ 07 ພຶດສະພາ 2007 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ